ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********************

ກະຊວງການເງິນ
ກົມຈັດຕັ້ງ ແລະ ພະນັກງານ                    ເລກທີ          /ກງ.ກຈພ
ນະຄອນຫຼວງວຽງຈັນ, ວັນທີ

# ແຈ້ງການ

**ເຖິງ**: ບັນດາທ່ານທີ່ມີຄວາມສົນໃຈເຂົ້າເປັນລັດຖະກອນຂອງຂະແໜງການເງິນ.
**ເລື່ອງ**: ການສອບເສັງຄັດເລືອກເອົາລັດຖະກອນໃໝ່ ສົກປີ 2013-2014.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 82/ນຍ, ລົງວັນທີ 19 ພຶດສະພາ 2003 ວ່າດ້ວຍລະບຽບລັດຖະກອນ ແຫ່ງ ສ ປ ປ ລາວ;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 17 ກໍລະກົດ 2013 ວ່າດ້ວຍການອະນຸມັດຈຳນວນຕົວເລກລັດຖະກອນໃໝ່ໃນສົກງົບປະມານ 2013-2014.

ກະຊວງການເງິນ ຈະໄດ້ສອບເສັງຄັດເລືອກເອົາລັດຖະກອນໃໝ່ ສຳລັບສົກປີ 2013-2014 ເພື່ອບັນຈຸເຂົ້າໃສ່ຕຳແໜ່ງງານທີ່ຍັງຫວ່າງ ເຊິ່ງມີລາຍລະອຽດດັ່ງນີ້:

**I: ຢູ່ກະຊວງການເງິນ**:

| | | |
|---|---|---|
| 1 | ຫ້ອງການກະຊວງ | 04 ໂກຕ້າ |
| 2 | ກົມຈັດຕັ້ງ ແລະ ພ/ງ | 04 ໂກຕ້າ |
| 3 | ສູນ FICT | 07 ໂກຕ້າ |
| 4 | ກົມສະສົມແຫ່ງລັດ | 02 ໂກຕ້າ |
| 5 | ກົມຮ່ວມມືສາກົນ | 02 ໂກຕ້າ |
| 6 | ກົມການເງິນຕ່າງປະເທດ | 03 ໂກຕ້າ |
| 7 | ກົມນະໂຍບາຍການເງິນ | 04 ໂກຕ້າ |
| 8 | ກົມພາສີ | 01 ໂກຕ້າ |

| | | |
|---|---|---|
| 9 | ກົມຄຸ້ມຄອງຊັບສິນ | 03 ໂກຕ້າ |
| 10 | ກົມຄຸ້ມຄອງການເງິນ | 03 ໂກຕ້າ |
| 11 | ກົມກວດກາ | 03 ໂກຕ້າ |
| 12 | ກົມງົບປະມານ | 04 ໂກຕ້າ |
| 13 | ຄັງເງິນແຫ່ງຊາດ | 04 ໂກຕ້າ |
| 14 | ກົມບັນຊີ | 10 ໂກຕ້າ |
| 15 | ກົມສ່ວຍສາອາກອນ | 08 ໂກຕ້າ |

II: **ບັນດາແຂວງ**:

| | | |
|---|---|---|
| 1 | ແຂວງຜົ້ງສາລີ | 23 ໂກຕ້າ |
| 2 | ແຂວງຫຼວງນ້ຳທາ | 25 ໂກຕ້າ |

| | | |
|---|---|---|
| 10 | ແຂວງວຽງຈັນ | 23 ໂກຕ້າ |
| 11 | ນະຄອນຫຼວງວຽງຈັນ | 10 ໂກຕ້າ |

| | | |
|---|---|---|
| 3 | ແຂວງບໍ່ແກ້ວ | 20 ໂກຕ້ |
| 4 | ແຂວງອຸດົມໄຊ | 25 ໂກຕ້າ |
| 5 | ແຂວງຫຼວງພະບາງ | 03 ໂກຕ້າ |
| 6 | ແຂວງໄຊຍະບູລີ | 09 ໂກຕ້າ |
| 7 | ແຂວງຫົວພັນ | 26 ໂກຕ້າ |
| 8 | ແຂວງຊຽງຂວາງ | 25 ໂກຕ້າ |
| 9 | ແຂວງໄຊສົມບູນ | 20 ໂກຕ້າ |

| | | |
|---|---|---|
| 12 | ແຂວງບໍລິຄຳໄຊ | 19 ໂກຕ້າ |
| 13 | ແຂວງຄຳມ່ວນ | 22 ໂກຕ້າ |
| 14 | ແຂວງສະຫວັນນະເຂດ | 09 ໂກຕ້າ |
| 15 | ແຂວງສາລະວັນ | 12 ໂກຕ້າ |
| 16 | ແຂວງເຊກອງ | 14 ໂກຕ້າ |
| 17 | ແຂວງອັດຕະປື | 20 ໂກຕ້າ |

III: **<u>ພາສີປະຈຳເຂດ</u>**:

| | | |
|---|---|---|
| 1 | ພາສີປະຈຳເຂດ I | 05 ໂກຕ້າ |
| 2 | ພາສີປະຈຳເຂດ II | 03 ໂກຕ້າ |
| 3 | ພາສີປະຈຳເຂດ V | 05 ໂກຕ້ |

IV: **<u>ວຸດທິການສຶກສາ ແລະ ວິຊາທີ່ຕ້ອງການ</u>**:

- ລະດັບຊັ້ນສູງຂຶ້ນໄປ ແລະ ວິຊາການເງິນ-ການບັນຊີ, ການເງິນ-ທະນາຄານ, ບໍລິຫານທຸລະກິດ, ເສດຖະສາດ, ກົດໝາຍ, ກົດໝາຍການປົກຄອງ, IT, ເລຂານຸການ ແລະ ວິຊາອື່ນໆທີ່ຕິດພັນ.

V: **<u>ເງື່ອນໄຂຂອງຜູ້ສະໝັກ</u>**:

1. ມີໃບຢັ້ງຢືນສອບເສັງຜ່ານພາກຄວາມຮູ້ທົ່ວໄປ (ຮອບທີ I) ຂອງກະຊວງພາຍໃນ.
2. ມີໃບປະກາດສະນີຍະບັດ ແລະ ໃບຄະແນນ.
3. ຮູບຖ່າຍບໍ່ກາຍ 3 ເດືອນ ຂະໜາດ 3x4 ຈຳນວນ 3 ໃບ.
4. ມີໃບແຈ້ງໂທດຈາກສານ.
5. ມີໃບກວດສຸຂະພາບຈາກໂຮງໝໍລັດ.

- ເປີດຮັບຄຳຮ້ອງນັບແຕ່ວັນທີ 21-30 ເມສາ 2014 (ຂັ້ນສູນກາງ ສະໝັກໄດ້ທີ່ກົມຈັດຕັ້ງ ແລະ ພະນັກງານກະຊວງການເງິນ, ສ່ວນຂັ້ນແຂວງແມ່ນພະແນກການເງິນແຂວງ, ນະຄອນຫຼວງ ແລະ ພາສີປະຈຳເຂດ I, ເຂດ II ແລະ ເຂດ V) ໃນໂມງລັດຖະການ;
- ທ່ານໃດມີຈຸດປະສົງເຂົ້າເຮັດວຽກຢູ່ກົມໃດໃຫ້ຂຽນໃບຄຳຮ້ອງ ເພື່ອສອບເສັງເຂົ້າກົມດັ່ງກ່າວ.
- ຄ່າທຳນຽມໃນການສະໝັກແມ່ນ 25.000 ກີບ/ຊຸດ (ຊາວຫ້າພັນກີບ).
- ມື້ສອບເສັງແມ່ນ 10 ພຶດສະພາ 2014, ເວລາ 09:00 ໂມງ, ສູນກາງແມ່ນສອບເສັງຢູ່ທີ່ສະຖາບັນເສດຖະກິດການເງິນດົງຄຳຊ້າງ; ສຳລັບຢູ່ບັນດາແຂວງແມ່ນຄະນະຮັບຜິດຊອບການສອບເສັງຂັ້ນແຂວງຈະແຈ້ງໃຫ້ຊາບ ແລະ ພາສີປະຈຳເຂດແມ່ນສອບເສັງຢູ່ແຂວງພາສີປະຈຳເຂດຕັ້ງຢູ່.

- ຂໍ້ມູນເພີ່ມເຕີມສອບຖາມໄດ້ທີ່ ໂທ:021 451836; ມືຖື: 020 55604050; 020 77822122; 020 22222883 ແລະ www.mof.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານທີ່ມີຄວາມສົນໃຈ ສະໝັກສອບເສັງເຂົ້າເປັນລັດຖະກອນຂະແໜງການເງິນຊາບທົ່ວເຖິງກັນ.

**ຮັກສາການຫົວໜ້າກົມຈັດຕັ້ງ ແລະ ພະນັກງານ**